**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ — ເລກທີ 2668 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 25 ພຶດສະພາ 2026

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມກິລາລະດັບສູງ

- ອີງຕາມ ກົດໝາຍວ່າດ້ວຍກິລາ-ກາຍຍະກຳ ສະບັບເລກທີ 74/ສພຊ, ລົງວັນທີ 25 ພະຈິກ 2019;
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 69/ສພຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 90/ນຍ, ລົງວັນທີ 20 ເມສາ 2026;
- ອີງຕາມ ໜັງສືສະເໜີຂອງ ກົມຈັດຕັ້ງ ສະບັບເລກທີ 351/ຈຕ, ລົງວັນທີ 21 ພຶດສະພາ 2026.

## ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບກົງຈັກ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມກິລາລະດັບສູງ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາການສຶກສາ ແລະ ກິລາ ແລະ ແຜນພັດທະນາວຽກງານກິລາລະດັບສູງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມກິລາລະດັບສູງ ຂຽນດ້ວຍຕົວອັກສອນຫຍໍ້ **"ກສ"** ເປັນກົງຈັກບໍລິຫານ ໃນໂຄງປະກອບການຈັດຕັ້ງຂອງກະຊວງສຶກສາທິການ ແລະ ກິລາ ມີພາລະບົດບາດເປັນເສນາທິການ ໃຫ້ແກ່ລັດຖະມົນຕີ ກ່ຽວກັບການຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາວຽກງານກິລາລະດັບສູງ, ສ້າງ ແລະ ພັດທະນານັກກິລາອາຊີບ ເພື່ອເຂົ້າຮ່ວມການແຂ່ງຂັນໃນລະດັບ ອານຸພາກພື້ນ, ພາກພື້ນ ແລະ ສາກົນ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມກິລາລະດັບສູງ ມີໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍແນວທາງນະໂຍບາຍ, ກົດລະບຽບ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດ, ທິດທາງແຜນການ ແລະ ຍຸດທະສາດຂອງກະຊວງສຶກສາທິການ ແລະ ກິລາ ເພື່ອສ້າງເປັນແຜນພັດທະນາວຽກງານກິລາລະດັບສູງ;
2. ສ້າງ, ປັບປຸງນິຕິກຳ ບໍລິຫານ-ຄຸ້ມຄອງວຽກງານກິລາລະດັບສູງ ໃຫ້ໄດ້ມາດຕະຖານ;
3. ຊີ້ນຳ, ຊຸກຍູ້ ແລະ ສົ່ງເສີມ ການສ້າງຄວາມເຂັ້ມແຂງ ໃຫ້ແກ່ບຸກຄະລາກອນກິລາລະດັບສູງ ແລະ ການຈັດຕັ້ງກິລາທາງສັງຄົມ ພ້ອມທັງພັດທະນານັກກິລາ ທີ່ມີພອນສະຫວັນ, ສະໝັກຫຼິ້ນ ແລະ ອາຊີບ ໃຫ້ໄດ້ມາດຕະຖານສາກົນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
4. ເປັນໃຈກາງໃນການປະສານງານ ການກະກຽມຈັດຕັ້ງງານມະຫາກຳກິລາແຫ່ງຊາດ ແລະ ຄຸ້ມຄອງເຕັກນິກຈັດການແຂ່ງຂັນກິລາລະດັບຊາດ;
5. ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ຮຽບຮຽງ ຄູ່ມືການຝຶກແອບ, ຝຶກຊ້ອມ, ກົດລະບຽບກິລາ, ກະຕິກາກິລາສາກົນ ກ່ຽວກັບກິລາລະດັບສູງ ໂດຍປະສານສົມທົບກັບ ສະຫະພັນກິລາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ;
6. ຊີ້ນຳ, ຊຸກຍູ້ ແລະ ສົ່ງເສີມ ການຄົ້ນຄວ້າ, ວິໄຈ ວິທະຍາສາດ ແລະ ເຕັກໂນໂລຊີການກິລາ ເພື່ອພັດທະນາວຽກງານກິລາລະດັບສູງ;
7. ຄຸ້ມຄອງ ຊ່ຽວຊານ, ນັກວິຊາການ, ຄູຝຶກ, ນັກກິລາ ແລະ ອາສາສະໝັກ ຕ່າງປະເທດ ທີ່ມາປະຕິບັດວຽກງານພັດທະນາກິລາລະດັບສູງ ຢູ່ ສປປ ລາວ;
8. ຄົ້ນຄວ້າ ແລະ ນຳສະເໜີ ຂໍອະນຸມັດຮັບຮອງເອົາການສ້າງຕັ້ງ, ປັບປຸງການຈັດຕັ້ງ, ການແຂ່ງຂັນກິລາ ແລະ ການເຂົ້າຮ່ວມການແຂ່ງຂັນກິລາ ຄະນະກຳມະການໂອແລມປິກແຫ່ງຊາດລາວ, ສະຫະພັນກິລາແຫ່ງຊາດ, ສະຫະພັນກິລາມະຫາວິທະຍາໄລລາວ ແລະ ຫົວໜ່ວຍທຸລະກິດກິລາ ຕາມການແບ່ງຂັ້ນຄຸ້ມຄອງ;
9. ຄຸ້ມຄອງ, ຊຸກຍູ້ ແລະ ສົ່ງເສີມ ການເຄື່ອນໄຫວ ຂອງບັນດາສະຫະພັນກິລາແຫ່ງຊາດ ຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງ ສອດຄ່ອງກັບກົດໝາຍວ່າດ້ວຍກິລາ-ກາຍຍະກຳ, ກົດລະບຽບຂອງສະຫະພັນກິລາສາກົນ ແລະ ລະບຽບການທີ່ກ່ຽວຂ້ອງ ພ້ອມທັງຄຸ້ມຄອງ ຫົວໜ່ວຍທຸລະກິດກິລາ ຕາມການແບ່ງຂັ້ນຄຸ້ມຄອງ;
10. ຄົ້ນຄວ້າ ສ້າງຮ່າງສັນຍາ, ບົດບັນທຶກຄວາມເຂົ້າໃຈ (MOU) ແລະ ບົດບັນທຶກຂໍ້ຕົກລົງຮ່ວມມືດ້ານກິລາລະດັບສູງ ກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
11. ປະສານສົມທົບກັບ ຄະນະກຳມະການໂອແລມປິກແຫ່ງຊາດລາວ, ບັນດາສະຫະພັນກິລາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການເຂົ້າຮ່ວມແຂ່ງຂັນກິລາລະດັບ ອານຸພາກພື້ນ, ພາກພື້ນ ແລະ ສາກົນ;

12. ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດບັນດາໂຄງການຕ່າງໆ ຂອງຄະນະກຳມະການໂອແລມປິກແຫ່ງຊາດລາວ, ສະຫະພັນກິລາແຫ່ງຊາດລາວ ແລະ ການຈັດຕັ້ງກິລາທາງສັງຄົມ ທີ່ກ່ຽວຂ້ອງ;
13. ຊີ້ນຳ ແລະ ຄຸ້ມຄອງ ສະຖາບັນກິລາ-ກາຍຍະກຳ, ສະໜາມກິລາແຫ່ງຊາດ (ຫຼັກ 16), ສະໜາມກິລາລະດັບຊາດ;
14. ສ້າງ ແລະ ປັບປຸງ ລະບົບຖານຂໍ້ມູນ ກ່ຽວກັບການຄຸ້ມຄອງວຽກງານກິລາລະດັບສູງ ໂດຍອີງໃສ່ມາດຕະຖານການຄຸ້ມຄອງຂໍ້ມູນ ຂະແໜງການສຶກສາທິການ ແລະ ກິລາ ພ້ອມທັງ ເຜີຍແຜ່ຂໍ້ມູນຂ່າວສານກິລາລະດັບສູງ;
15. ພົວພັນ, ຮ່ວມມື ປະສານງານກັບ ຫ້ອງການ, ກົມ, ອົງການລັດທຽບເທົ່າກົມ, ສູນ, ສະຖານການສຶກສາ ແລະ ອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ;
16. ກວດກາ, ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບ ລາຍງານການຈັດຕັ້ງປະຕິບັດວຽກງານຂອງກົມ ໃຫ້ຂັ້ນເທິງເປັນປົກກະຕິ;
17. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະມົນຕີ.

**ມາດຕາ 4 ຂອບເຂດສິດ**

ກົມກິລາລະດັບສູງ ມີຂອບເຂດສິດ ດັ່ງນີ້:

1. ສະເໜີແຜນການ ແລະ ແຜນງົບປະມານ ເພື່ອພັດທະນາວຽກງານທີ່ຕົນຮັບຜິດຊອບຕໍ່ລັດຖະມົນຕີ;
2. ສະເໜີລັດຖະມົນຕີ ພິຈາລະນາ ອະນຸມັດ ປັບປຸງ, ສ້າງ ຫຼື ຍົກເລີກບັນດານິຕິກຳຄຸ້ມຄອງການສຶກສາ ແລະ ກິລາ ທີ່ບໍ່ສອດຄ່ອງ;
3. ສະເໜີຕໍ່ລັດຖະມົນຕີ ພິຈາລະນາ ອະນຸມັດ ການສ້າງຕັ້ງ ຫຼື ຍົກເລີກ ຫົວໜ່ວຍການຈັດຕັ້ງຕ່າງໆຂອງກົມ, ບັນດາສະຫະພັນກິລາແຫ່ງຊາດ ແລະ ຫົວໜ່ວຍທຸລະກິດການກິລາ ຕາມການແບ່ງຂັ້ນຄຸ້ມຄອງ;
4. ສະເໜີລັດຖະມົນຕີ ພິຈາລະນາ ການບັນຈຸ, ສັບຊ້ອນ, ຍົກຍ້າຍ, ແຕ່ງຕັ້ງ ແລະ ປົດຕຳແໜ່ງພະນັກງານ-ລັດຖະກອນ ພາຍໃນກົມ ຕາມກົດໝາຍ ແລະ ລະບຽບການ;
5. ສະເໜີການປະຕິບັດນະໂຍບາຍຕ່າງໆ ຕໍ່ຜູ້ທີ່ມີຜົນງານ ແລະ ປະຕິບັດວິໄນ ຕໍ່ຜູ້ລະເມີດໃນການເຂົ້າຮ່ວມແຂ່ງຂັນກິລາລະດັບສູງ;
6. ຄຸ້ມຄອງ, ນຳໃຊ້ງົບປະມານ, ວັດຖຸ, ຊັບສິນ, ກອງທຶນ ແລະ ທຶນຊ່ວຍເຫຼືອ ປະເພດຕ່າງໆ ຕາມການອະນຸມັດຂອງລັດຖະມົນຕີ;
7. ປະຕິບັດໂຄງການຊ່ວຍເຫຼືອລ້າ, ໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕາມການອະນຸມັດຂອງລັດຖະມົນຕີ;
8. ສະເໜີລັດຖະມົນຕີ ປົກປ້ອງ, ຄຸ້ມຄອງບຸກຄະລາກອນ, ຊັບສິນ ແລະ ລິຂະສິດທາງດ້ານການກິລາ;
9. ປະຕິບັດສິດອື່ນ ຕາມການມອບໝາຍຂອງລັດຖະມົນຕີ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກຂອງ ກົມກິລາລະດັບສູງ ປະກອບມີ 5 ພະແນກ ຄື:

1. ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;
2. ພະແນກຈັດການແຂ່ງຂັນກິລາ;
3. ພະແນກພັດທະນາກິລາ;
4. ພະແນກປະສານງານກິລາ;
5. ພະແນກ ກວດກາ, ຕິດຕາມ ແລະ ປະເມີນຜົນ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ກົມກິລາລະດັບສູງ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກົມ 01 ທ່ານ, ມີຄວາມຮັບຜິດຊອບຕໍ່ ລັດຖະມົນຕີ ແລະ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ຜູ້ຊີ້ນຳຂົງເຂດວຽກງານ ກ່ຽວກັບຜົນສຳເລັດ ແລະ ຂໍ້ຄົງຄ້າງບົກຜ່ອງ ໃນການປະຕິບັດວຽກງານຂອງຕົນ.

   ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມ ທ່ານໃດໜຶ່ງຮັກສາການແທນ.

2. ມີຮອງຫົວໜ້າກົມຈຳນວນໜຶ່ງ ຊ່ວຍຫົວໜ້າກົມ ໃນການຊີ້ນຳວຽກງານ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງຫົວໜ້າກົມ ກ່ຽວກັບຜົນສຳເລັດ ແລະ ຂໍ້ຄົງຄ້າງບົກຜ່ອງ ໃນວຽກງານທີ່ຕົນຊີ້ນຳ.

   ຮອງຫົວໜ້າກົມ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າກົມ ພາຍຫຼັງກັບມາປະຈຳການ;

3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ ທີ່ຂັ້ນເທິງອະນຸມັດ.

ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7 ໜ້າທີ່ຂອງພະແນກ ບໍລິຫານ ແລະ ຄົ້ນຄວ້າ-ສັງລວມ**

ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ສັງລວມ ແລະ ສ້າງແຜນພັດທະນາວຽກງານ ຂອງກົມ;
2. ສ້າງ ແລະ ປັບປຸງນິຕິກຳຕ່າງໆ ເພື່ອບໍລິຫານຄຸ້ມຄອງຂອງກົມ;
3. ເປັນເລຂານຸການ, ປະສານການນັດໝາຍເຊີນ ແລະ ວຽກງານພິທີການ ຂອງກົມ;
4. ຄຸ້ມຄອງເອກະສານ, ອັດສຳເນົາ, ສົ່ງເອກະສານ ແລະ ແຈ້ງຂ່າວ ພາຍໃນກົມ;

5. ສັງລວມ ແລະ ສະເໜີແຜນງົບປະມານຮັບໃຊ້ປະຈໍາປີ, ແຜນງົບປະມານຮັບໃຊ້ການແຂ່ງຂັນພາຍໃນ ແລະ ຕ່າງປະເທດ ພ້ອມທັງສະຫຼຸບລາຍງານ;
6. ຄຸ້ມຄອງ, ນໍາໃຊ້ງົບປະມານ-ການເງິນ, ລົງບັນຊີລາຍຮັບ-ລາຍຈ່າຍ, ວັດຖຸ, ຊັບສິນ, ກອງທຶນ ຕາມກົດໝາຍ ແລະ ລະບຽບການ;
7. ຄຸ້ມຄອງຍານພາຫະນະ, ວັດສະດຸ, ອຸປະກອນ ແລະ ບຸກຄະລາກອນຂອງກົມ;
8. ຄົ້ນຄວ້າ ການສ້າງຕັ້ງ ຫຼື ຍົກເລີກ ຫົວໜ່ວຍການຈັດຕັ້ງຕ່າງໆ ຂອງກົມ;
9. ຄົ້ນຄວ້າ ການຂຽນຄູ່ມືວິທີການເຮັດວຽກ ແລະ ການກໍານົດຕໍາແໜ່ງງານຂອງກົມ;
10. ຄົ້ນຄວ້າ ການບັນຈຸ, ສັບຊ້ອນ, ຍົກຍ້າຍ, ແຕ່ງຕັ້ງ ແລະ ປົດຕໍາແໜ່ງພະນັກງານ-ລັດຖະກອນ ພາຍໃນກົມ ຕາມກົດໝາຍ ແລະ ລະບຽບການ;
11. ສະເໜີການປະຕິບັດນະໂຍບາຍຕ່າງໆ ຕໍ່ຜູ້ມີຜົນງານ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດ ໃນການເຂົ້າຮ່ວມແຂ່ງຂັນກິລາລະດັບສູງ;
12. ສະຫຼຸບລາຍງານ ແຜນການເຄື່ອນໄຫວ ປະຈໍາອາທິດ, ປະຈໍາເດືອນ, ປະຈໍາ 3 ເດືອນ, ປະຈໍາ 6 ເດືອນຕົ້ນປີ, 6 ເດືອນທ້າຍປີ ແລະ ປະຈໍາປີ ຂອງກົມ;
13. ປະສານສົມທົບກັບບັນດາພະແນກ ແລະ ຫ້ອງການພາຍໃນກົມໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;
14. ກວດກາ, ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານພາຍໃນພະແນກ ໃຫ້ຄະນະກົມ ແລະ ຂັ້ນເທິງຊາບ ໃນແຕ່ລະໄລຍະ;
15. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 8 ໜ້າທີ່ຂອງ ພະແນກຈັດການແຂ່ງຂັນກິລາ**

ພະແນກຈັດການແຂ່ງຂັນກິລາ ມີໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍ ແຜນຍຸດທະສາດ, ວາງແຜນການພັດທະນາ ການຈັດແຂ່ງຂັນກິລາລະດັບສູງ ແລະ ຂຶ້ນແຜນງົບປະມານຮັບໃຊ້ ວຽກງານພາຍໃນພະແນກ;
2. ຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກໍາຕ່າງໆ ເພື່ອບໍລິຫານ-ຄຸ້ມຄອງວຽກງານຈັດການແຂ່ງຂັນກິລາລະດັບສູງ ໃຫ້ໄດ້ມາດຕະຖານສາກົນ;
3. ຊຸກຍູ້ ແລະ ສົ່ງເສີມ ບັນດາສະຫະພັນກິລາ ປະເພດຕ່າງໆ ໃນການຈັດຕັ້ງການແຂ່ງຂັນກິລາລະດັບສູງ ໃຫ້ຖືກຕ້ອງຕາມລະບົບ ແລະ ມາດຕະຖານສາກົນ;
4. ຄົ້ນຄວ້າ, ສ້າງ, ແປ ແລະ ຮຽບຮຽງ ເອກະສານ, ປື້ມກະຕິກາກິລາ, ຂໍ້ກໍານົດ, ກົດລະບຽບການແຂ່ງຂັນກິລາ, ມາດຕະຖານສະໜາມຝຶກຊ້ອມ ແລະ ແຂ່ງຂັນກິລາລະດັບສູງ;
5. ຈັດຝຶກອົບຮົມຍົກລະດັບ ໃຫ້ແກ່ກໍາມະການຕັດສິນ, ຜູ້ຄວບຄຸມການແຂ່ງຂັນກິລາ ໂດຍປະສານສົມທົບກັບ ຫ້ອງການຄະນະກໍາມະການໂອແລມປິກແຫ່ງຊາດລາວ, ບັນດາຫ້ອງການຂອງສະຫະພັນກິລາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ;
6. ປະສານສົມທົບກັບບັນດາພະແນກການພາຍໃນກົມ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;
7. ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານພາຍໃນພະແນກ ໃຫ້ຄະນະກົມ ແລະ ຂັ້ນເທິງຊາບ ໃນແຕ່ລະໄລຍະ;
8. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 9 ໜ້າທີ່ຂອງ ພະແນກພັດທະນາກິລາ**

ພະແນກພັດທະນາກິລາ ມີໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍແຜນຍຸດທະສາດ, ສ້າງແຜນພັດທະນາ ບຸກຄະລາກອນກິລາ ລະດັບສູງ, ນັກກິລາ ແລະ ຂື້ນແຜນງົບປະມານຮັບ ໃຊ້ວຽກງານພາຍໃນພະແນກ;
2. ຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກຳຕ່າງໆ ກ່ຽວກັບວຽກງານການພັດທະນາກິລາ;
3. ສ້າງຫຼັກສູດ ແລະ ຈັດຝຶກອົບຮົມຍົກລະດັບ ໃຫ້ແກ່ບຸກຄະລາກອນກິລາລະດັບສູງ ແລະ ນັກກິລາ ໂດຍປະສານສົມທົບກັບ ຄະນະກຳມະການໂອແລມປິກແຫ່ງຊາດລາວ, ບັນດາສະຫະພັນກິລາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ;
4. ຄົ້ນຄວ້າ, ສ້າງ, ແປ ແລະ ຮຽບຮຽງ ເອກະສານ, ຕຳລາ, ຄູ່ມືການຝຶກຊ້ອມ ແລະ ວິທະຍາສາດການກິລາ;
5. ຄົ້ນຄວ້າ, ວິໄຈ ວິທະຍາສາດ ແລະ ເຕັກໂນໂລຊີການກິລາ ພ້ອມທັງເຜີຍແຜ່ຜົນງານການຄົ້ນຄວ້າ ວິໄຈ ເພື່ອພັດທະນາວຽກງານກິລາລະດັບສູງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
6. ປະສານສົມທົບກັບ ຄະນະກຳມະການໂອແລມປິກແຫ່ງຊາດລາວ, ບັນດາສະຫະພັນກິລາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການກະກຽມເຂົ້າຮ່ວມການແຂ່ງຂັນກິລາລະດັບ ອານຸພາກພື້ນ, ພາກພື້ນ ແລະ ສາກົນ;
7. ປະສານສົມທົບກັບບັນດາພະແນກການພາຍໃນກົມ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;
8. ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານ ພາຍໃນພະແນກ ໃຫ້ຄະນະກົມ ແລະ ຂັ້ນເທິງຊາບ ໃນແຕ່ລະໄລຍະ;
9. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 10 ໜ້າທີ່ຂອງ ຂອງພະແນກປະສານງານກິລາ**

ພະແນກປະສານງານກິລາ ມີໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍແຜນຍຸດທະສາດ, ວາງແຜນການພັດທະນາ ວຽກງານການປະສານງານກິລາລະດັບສູງ ແລະ ຂື້ນແຜນງົບປະມານຮັບໃຊ້ວຽກງານພາຍໃນພະແນກ;
2. ຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກຳຕ່າງໆ ເພື່ອບໍລິຫານ-ຄຸ້ມຄອງວຽກງານການປະສານງານກິລາລະດັບສູງ;
3. ເປັນເສນາທິການ ໃນການປະສານສົມທົບກັບ ຫ້ອງການຄະນະກຳມະການໂອແລມປິກແຫ່ງຊາດລາວ ແລະ ບັນດາຫ້ອງການຂອງສະຫະພັນກິລາແຫ່ງຊາດ ເພື່ອຈັດຕັ້ງປະຕິບັດວຽກງານປະສານງານກິລາ ໃນແຕ່ລະໄລຍະ;
4. ສ້າງຄວາມເຂັ້ມແຂງໃຫ້ແກ່ ຜູ້ບໍລິຫານ ແລະ ວິຊາການກິລາ ກ່ຽວກັບວຽກງານປະສານງານ ແລະ ວຽກງານພັດທະນາໂຄງການກິລາລະດັບສູງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
5. ຄົ້ນຄວ້າ ສ້າງຮ່າງສັນຍາ, ບົດບັນທຶກຄວາມເຂົ້າໃຈ ແລະ ບົດບັນທຶກຂໍ້ຕົກລົງຮ່ວມມືດ້ານກິລາລະດັບສູງ ກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງເກັບກຳສະຖິຕິ ກ່ຽວກັບວຽກງານສັນຍາຮ່ວມມື;
6. ຄົ້ນຄວ້າ ແລະ ສ້າງໂຄງການພາຍໃຕ້ສັນຍາຮ່ວມມື ໃຫ້ສອດຄ່ອງກັບແຜນພັດທະນາກິລາລະດັບສູງ;

7. ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ແກ່ບັນດາສະຫະພັນກິລາແຫ່ງຊາດໃນການເຂົ້າຮ່ວມການແຂ່ງຂັນ, ເຂົ້າຮ່ວມກອງປະຊຸມ, ການສະໝັກເຂົ້າເປັນສະມາຊິກ ແລະ ຮັບເອົາການຊ່ວຍເຫຼືອຈາກສະຫະພັນກິລາສາກົນ;
8. ປະສານສົມທົບກັບບັນດາພະແນກການພາຍໃນກົມ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;
9. ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານພາຍໃນພະແນກໃຫ້ຄະນະກົມ ແລະ ຂັ້ນເທິງຊາບ ໃນແຕ່ລະໄລຍະ;
10. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 11 ໜ້າທີ່ຂອງ ພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ**

ພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ ມີໜ້າທີ່ດັ່ງນີ້:

1. ສ້າງແຜນຍຸດທະສາດ, ແຜນການຈັດຕັ້ງປະຕິບັດ ແລະ ແຜນຄາດຄະເນງົບປະມານຮັບໃຊ້ວຽກງານພັດທະນາກິລາລະດັບສູງ ພ້ອມທັງວາງແຜນພັດທະນາ ວຽກງານກວດກາ, ຕິດຕາມ ແລະ ປະເມີນຜົນ ພາຍໃນພະແນກ;
2. ຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກໍາຕ່າງໆ ເພື່ອບໍລິຫານ-ຄຸ້ມຄອງວຽກງານຂໍ້ມູນກິລາລະດັບສູງ;
3. ຄົ້ນຄວ້າ ແລະ ນໍາສະເໜີຂໍອະນຸມັດ ສ້າງຕັ້ງ ແລະ ປັບປຸງການຈັດຕັ້ງ ບັນດາສະຫະພັນກິລາແຫ່ງຊາດ ແລະ ຫົວໜ່ວຍທຸລະກິດກິລາ ພ້ອມທັງ ເກັບກໍາຂໍ້ມູນ ແລະ ຂຶ້ນທະບຽນ ທີ່ໄດ້ຮັບອະນຸຍາດ;
4. ສ້າງຄວາມເຂັ້ມແຂງໃຫ້ຜູ້ບໍລິຫານ ແລະ ນັກວິຊາການ ກ່ຽວກັບວຽກງານຄຸ້ມຄອງຂໍ້ມູນ ແລະ ການສ້າງແຜນພັດທະນາກິລາລະດັບສູງ;
5. ຄົ້ນຄວ້າ ວິໄຈ ແລະ ສ້າງລະບົບຖານຂໍ້ມູນ ວຽກງານກິລາລະດັບສູງ ໃຫ້ໄດ້ມາດຕະຖານ ແລະ ທັນສະໄໝ ພ້ອມທັງ ເຜີຍແຜ່ ແລະ ສະໜອງຂໍ້ມູນ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ;
6. ຕິດຕາມ, ປະເມີນຜົນ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນຈັດຕັ້ງປະຕິບັດຂອງກົມ, ຂອງສະຖາບັນກິລາ-ກາຍຍະກໍາ, ສະໜາມກິລາແຫ່ງຊາດ (ຫຼັກ 16), ຂະແໜງກິລາລະດັບສູງ ຂອງບັນດາແຂວງ, ນະຄອນຫຼວງ ແລະ ອົງການຈັດຕັ້ງກິລາທາງສັງຄົມ;
7. ປະສານສົມທົບກັບ ຫ້ອງການຂອງຄະນະກໍາມະການໂອແລມປິກແຫ່ງຊາດລາວ, ບັນດາຫ້ອງການຂອງສະຫະພັນກິລາແຫ່ງຊາດ, ຂະແໜງກິລາລະດັບສູງ ຂອງບັນດາແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ສ້າງເຄື່ອງມື ແລະ ເກັບກໍາຂໍ້ມູນກິລາລະດັບສູງ;
8. ປະສານສົມທົບກັບບັນດາພະແນກການພາຍໃນກົມ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;
9. ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານພາຍໃນພະແນກໃຫ້ຄະນະກົມ ແລະ ຂັ້ນເທິງຊາບ ໃນແຕ່ລະໄລຍະ;
10. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 12 ຫຼັກການ**

ກົມກິລາລະດັບສູງ ເຄື່ອນໄຫວວຽກງານຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມ ຫຼັກການລວມສູນປະຊາທິປະໄຕ, ປະຕິບັດລະບອບຫົວໜ້າດຽວ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ; ຂັ້ນລຸ່ມຂຶ້ນກັບຂັ້ນເທິງ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ, ບຸກຄົນຂຶ້ນກັບການຈັດຕັ້ງ;
2. ທຸກການເຄື່ອນໄຫວ ຂອງກົມກິລາລະດັບສູງ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ລະບຽບກົດໝາຍ, ລະບຽບການ, ຫຼັກການລວມຂອງພັກ-ລັດ, ນໍາເອົາແນວທາງນະໂຍບາຍຂອງ ພັກ-ລັດຖະບານ ແລະ ນໍາເອົາແຜນການປະຈໍາປີ, ແຜນການ 05 ປີ ຂອງກະຊວງ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ;
3. ຮັກສາຄວາມລັບຂອງເອກະສານ ແລະ ຂໍ້ມູນຂອງກົມກິລາລະດັບສູງ ຢ່າງເຄັ່ງຄັດ ບໍ່ໃຫ້ຮົ່ວໄຫຼ;
4. ປະຕິບັດຫຼັກການຄວາມສະເໝີພາບ, ເຄົາລົບພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງບັນດາຫ້ອງການ, ກົມ ແລະ ອົງການທຽບເທົ່າກົມ ພາຍໃນກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 13 ແບບແຜນວິທີເຮັດວຽກ**

ກົມກິລາລະດັບສູງ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີ ແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ວຽກງານກິລາລະດັບສູງ ໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຮັບ-ຜົນເສຍ ພ້ອມທັງລາຍງານຢ່າງເປັນລະບົບ, ຂັ້ນລຸ່ມລາຍງານຂັ້ນເທິງຂອງຕົນ ຕາມຂັ້ນຕອນ;
3. ປະຕິບັດລະບອບປະຊຸມປະຈໍາເດືອນ, 3 ເດືອນ, 6 ເດືອນ, ປະຈໍາປີ ແລະ ປະຕິບັດລະບອບລາຍງານ ໃຫ້ຂັ້ນເທິງ ເປັນປົກກະຕິ;
4. ພົວພັນ ແລະ ປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 14 ງົບປະມານ ແລະ ຕາປະທັບ**

ກົມກິລາລະດັບສູງ ມີງົບປະມານຮັບໃຊ້ວຽກງານຂອງຕົນ ຊຶ່ງໄດ້ມາຈາກງົບປະມານ ຂອງກະຊວງສຶກສາທິການ ແລະ ກິລາ, ການຊ່ວຍເຫຼືອ, ການຮ່ວມມືຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ ແລະ ມີຕາປະທັບ ເພື່ອຮັບໃຊ້ວຽກງານທາງລັດຖະການ.

**ມາດຕາ 15 ການຜັນຂະຫຍາຍ**

ມອບໃຫ້ ກົມກິລາລະດັບສູງ ກໍານົດໜ້າທີ່, ກິດຈະກໍາລະອຽດ ແລະ ກໍານົດມາດຕະຖານ ແຕ່ລະຕໍາແໜ່ງງານ ເພື່ອນໍາສະເໜີລັດຖະມົນຕີ ບັນຈຸ ແລະ ສັບຊ້ອນ ພະນັກງານ-ລັດຖະກອນ ເຂົ້າໃສ່ຕໍາແໜ່ງງານຕາມຄວາມເໝາະສົມ.

**ມາດຕາ 16 ການຈັດຕັ້ງປະຕິບັດ**

ບັນດາ ຫ້ອງການ, ກົມ, ອົງການລັດທຽບເທົ່າກົມ, ສະຖາບັນ, ສູນ, ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ, ແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ, ຕາແສງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນ ຂໍ້ຕົກລົງສະບັບເລກທີ 4719/ສສກ, ລົງວັນທີ 19 ກັນຍາ 2022. ທຸກຂໍ້ຕົກລົງ ແລະ ເອກະສານຕ່າງໆ ຊຶ່ງປະກາດໃຊ້ໃນເມື່ອກ່ອນທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກລົບລ້າງ.

**ລັດຖະມົນຕີ**

ທອງສະລິດ ມັງໜໍ່ເມກ

**ບ່ອນນຳສົ່ງ:**

| | |
|---|---|
| 1. ຄະນະຈັດຕັ້ງສູນກາງພັກ | 1 ສະບັບ; |
| 2. ຫ້ອງການກະຊວງ | 1 ສະບັບ; |
| 3. ບັນດາກົມ, ສູນ ແລະ ສະຖາບັນພາກສ່ວນລະ | 1 ສະບັບ; |
| 4. ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ພາກສ່ວນລະ | 1 ສະບັບ; |
| 5. ພາກສ່ວນທີ່ກ່ຽວຂ້ອງ | 3 ສະບັບ; |
| 6. ເກັບມ້ຽນ | 3 ສະບັບ. |